**ບົດບັນທຶກຄວາມຮ່ວມມື**

**ລະຫວ່າງ**

**ມະຫາວິທະຍາໄລຣາຊ໌ພັດຊຽງຮາຍ ລາຊາອານາຈັກໄທ**

**ແລະ**

**ວິທະຍາໄລຄູຫຼວງນໍ້າທາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

----===000===----

ອະທິການມະຫາວິທະຍາໄລຣາຊ໌ພັດຊຽງຮາຍ ລາຊາອານາຈັກໄທ ແລະ ຮອງອຳນວຍການວິທະຍາໄລຄູຫຼວງນໍ້າທາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮ່ວມກັນສ້າງບົດບັນທຶກຄວາມຮ່ວມມື ແລະ ການແລກປ່ຽນທາງວິຊາການລະຫວ່າງສະຖາບັນທັງສອງແຫ່ງ ໂດຍມີລາຍລະອຽດຂອງໂດຍມີເນື້ອໃນລະອຽດດັ່ງນີ້:

1. ສະຖາບັນທັງສອງແຫ່ງພົວພັນແລກປ່ຽນ ແລະ ຮ່ວມກັນພັດທະນາແຫຼ່ງຄວາມຮູ້ດ້ານສັງຄົມສາດ, ມະນຸດສາດ ວິທະຍາສາດ ແລະສຶກສາສາດ ຕະຫຼອດເຖິງການສຶກສາດ້ານຊົນເຜົ່າ, ແຫຼ່ງຄວາມຮູ້ພູມປັນຍາທ້ອງຖິ່ນ, ການອະນຸລັກພັນພືດ ແລະ ການປ່ຽນແປງທາງເສດຖະກິດສັງຄົມ, ວັດທະນາທຳຊຸມຊົນທ້ອງຖິ່ນຂອງທັງສອງປະເທດ ໂດຍມີກິດຈະກຳສຳຄັນດັ່ງນີ້:
   1.1 . ການແລກປ່ຽນອາຈານ, ນັກວິໃຈ ແລະ ນັກສຶກສາເຊິ່ງກັນ ແລະ ກັນ
   1.2 . ການແລກປ່ຽນຂໍ້ມູນ ແລະ ເອກະສານສິ່ງພິມເຊິ່ງກັນ ແລະກັນ
   1.3 . ການພັດທະນາໂຄງການຄວາມຮ່ວມມືດ້ານການວິໃຈ ແລະ ການຈັດປະຊຸມວິຊາການຮ່ວມກັນ
   1.4 . ການພັດທະນາບຸກຄະລາກອນທາງວິຊາການໃນດ້ານຕ່າງໆ
2. ການດຳເນີນກິດຈະກຳຕ່າງໆ ຕາມຂໍ້ 1 ຈະດຳເນີນການໄດ້ ພາຍໃຕ້ການປຶກສາຫາລື ແລະ ເປັນຂໍ້ຕົກລົງຮ່ວມກັນຂອງທັງສອງຝ່າຍເທົ່ານັ້ນ.
3. ສັນຍາການຮ່ວມສະບັບນີ້ມີກຳນົດເວລາໃນການນຳໃຊ້ທັງໝົດ 5 ປີ ຫຼັງຈາກລົງລາຍເຊັນ ແລະ ອາດຈະຂະຫຍາຍເວລາຄວາມຮ່ວມມືຕໍ່ໄປໄດ້.
4. ບົດບັນທຶກຄວາມເຂົ້າໃຈສະບັບນີ້ສ້າງຂຶ້ນດ້ວຍ 3 ພາສາ ຄື: ພາສາລາວ, ພາສາໄທ ແລະ ພາສາອັງກິດ ເຊິ່ງມີເນື້ອໃນອັນດຽວກັນ.

ທີ່ມະຫາວິທະຍາໄລຣາຊ໌ພັດຊຽງຮາຍ ລາຊາອານາຈັກໄທ, ວັນທີ 9 ພະຈິກ 2016

| | |
|---|---|
| ອະທິການບໍດີມະຫາວິທະຍາໄລຣາຊະພັດຊຽງຮາຍ | ຮອງອຳນວຍການວິທະຍາໄລຄູຫຼວງນໍ້າທາ |
| ລາຊາອານາຈັກໄທ | ສ ປປ ລາວ |
| ທ່ານ ຜູ້ຊ່ວຍສາດສະດາຈານ ດຣ ທິດສະພົນ ອາຣີມິດ | ທ່ານ ອາຈານ ຄຳສຸກ ທອງກ່ານ |
| ພະຍານ | ພະຍານ |
| ຄະນະບໍດີຄະນະເທກໂນໂລຍີ ແລະ ອຸດສາຫະກຳ | ຫົວໜ້າຫ້ອງການຈັດຕັ້ງວິທະຍາໄລຄູຫຼວງນໍ້າທາ |
| ທ່ານ ຜູ້ຊ່ວຍສາດສະດາຈານ ດຣ ໄພໂຣດ ດ້ວງນະຄອນ | ທ່ານ ດຣ ສຸວິວັນ ພົມມະຈິດ |